ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214 013-4

ເລກທີ 2766 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 07 JUL 2025

# ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການເຝົ້າລະວັງ ແລະ ການຕອບໂຕ້ການລະບາດພະຍາດໄຂ້ຍຸງລາຍ.

- ອີງຕາມ ດຳລັດ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21 ກັນຍາ 2016.
- ອີງຕາມ ການຊີ້ນຳ ຂອງການນຳກະຊວງສາທາລະນະສຸກໃຫ້ເຝົ້າລະວັງ ແລະ ການຕອບໂຕ້ການລະບາດພະຍາດໄຂ້ຍຸງລາຍ ແລະ ພະຍາດຄໍຕີບ ຕາມພາລະບົດບາດ ຄວາມຮັບຜິດຊອບຂອງຂະແໜງການ.
- ອີງຕາມ ຄວາມສ່ຽງ ທີ່ອາດຈະເກີດສະພາບການລະບາດຂອງພະຍາດໄຂ້ຍຸງລາຍ ຢູ່ ສປປ ລາວ ໃນປະຈຸບັນ.

ເພື່ອເຝົ້າລະວັງ ແລະ ຕອບໂຕ້ການລະບາດພະຍາດໄຂ້ຍຸງລາຍ ທີ່ມີຄວາມສ່ຽງອາດຈະເກີດສະພາບການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ ຢູ່ ສປປ ລາວ ຢູ່ບາງແຂວງເປັນວົງກວ້າງ. ປະຊາຊົນສ່ວນໃຫຍ່ ເວລາເຈັບເປັນແມ່ນຈະໄປຊື້ຢາມາກິນເອງ ຕາມຮ້ານຂາຍຍ່ອຍຢາ ເຊິ່ງເປັນການປິ່ນປົວທີ່ບໍ່ຖືກຕ້ອງ, ການນຳໃຊ້ຢາຊະຊາຍ ອາດພາໃຫ້ເກີດເຊື້ອຕ້ານຕໍ່ຢາ, ເສຍເງິນ, ເສຍເວລາ, ຂາດໂອກາດໃນການປິ່ນປົວທີ່ຖືກຕ້ອງ ຫຼື ອາດພາໃຫ້ເສຍຊີວິດ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ບັນດາພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງ ຈົ່ງຊີ້ນຳ ຂະແໜງອາຫານ ແລະ ຢາແຂວງຂອງຕົນດັ່ງນີ້:

1. ໃຫ້ຂະແໜງອາຫານ ແລະ ຢາ ແລະ ຮ້ານຂາຍຍ່ອຍຢາ ເຜີຍແຜ່ຂໍ້ມູນຂ່າວສານທີ່ຖືກຕ້ອງໃຫ້ແກ່ສາທາລະນະຊົນຢ່າງທົ່ວເຖິງ ໃນເວລາເຈັບເປັນຕ້ອງໄປກວດ ແລະ ປິ່ງມະຕິພະຍາດຈາກແພດກ່ອນ, ບໍ່ຄວນຊື້ຢາກິນເອງ ພ້ອມທັງເຜີຍແຜ່ໃຫ້ຊຸມຊົນຕື່ນ ໃຫ້ເປັນເຈົ້າການ ແລະ ໃຫ້ການຮ່ວມມື ຕາມຫຼັກການປ້ອງກັນ ແລະ ຄວບຄຸມການແຜ່ລະບາດ.
2. ໃຫ້ຂະແໜງອາຫານ ແລະ ຢາເພີ່ມທະວີການຕິດຕາມ -ຊຸກຍູ້-ກ່າວເຕືອນ-ແນະນຳ ບັນດາຮ້ານຂາຍຍ່ອຍຢາ ທີ່ຢູ່ໃນຄວາມຮັບຜິດຊອບຂອງທ່ານ ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງ ສອດຄ່ອງຕາມຂໍ້ດຳລັດ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21 ກັນຍາ 2016 ໃຫ້ເຄື່ອນໄຫວຕາມພາລະບົດບາດ ສິດ ແລະໜ້າຂອງຕົນທີ່ໄດ້ຮັບອະນຸຍາດ.
3. ການບໍລິການຂອງຮ້ານຂາຍຍ່ອຍຢາຕ້ອງປະຕິບັດຢ່າງສອດຄ່ອງຕາມຫຼັກການ ການຂາຍຍ່ອຍຢາທີ່ດີ ເປັນຕົ້ນ: ແນະນຳ ແລະ ໃຫ້ຂໍ້ມູນກ່ຽວກັບວິທີການນຳໃຊ້ຢາ, ສັບພະຄຸນ, ອາການຂ້າງຄຽງ ແລະ ຜົນສະທ້ອນຂອງຢາ, ການຂາຍຢາຕ້ານເຊື້ອ, ຢາອອກລິດຕໍ່ຈິດ-ປະສາດ ແລະ ໝວດຢາອັນຕະລາຍທີ່ໃຊ້ໃນການຄວບຄຸມຂອງແພດຕ້ອງຂາຍຕາມໃບສັ່ງແພດ ແລະ ອື່ນໆ.
4. ຫ້າມ ນຳໃຊ້ສະຖານທີ່ຮ້ານຂາຍຍ່ອຍຢາເປັນບ່ອນກວດພະຍາດ, ປິ່ງມະຕິ ແລະ ປິ່ນປົວຄົນເຈັບ, ຖ້າກວດພົບໃຫ້ກ່າວເຕືອນ, ຂຽນບົດບັນທຶກຮ່ວມກັນໄວ້ໃນປຶ້ມຕິດຕາມ ພ້ອມແນະນຳໃຊ້ຢຸດຕິການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມພາລະບົດບາດ ໜ້າທີ່ຕົນ, ຖ້າພົບຄັ້ງຕໍ່ໄປສະເໜີໃຫ້ໂຈະການຕໍ່ທະບຽນວິຊາຊີບເພສັດຊະກຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມືໃນຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ